# ຝຶກອົບຮົມການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ



ໃນວັນທີ 17 ມີນາ 2026, ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ) ສະຫະພັນກຳມະບານ ທຫລ ໄດ້ຈັດຝຶກອົບຮົມການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 5 ເປັນເຈົ້າ ຂຶ້ນ ໂດຍການເປັນປະທານຂອງ ທ່ານ ນ. ມະໂນລາ ເມືອງມະນີ ກຳມະການພັກ ທຫລ, ປະທານ ຄະນະບໍລິຫານງານສະຫະພັນກຳມະບານ ທຫລ, ໃຫ້ກຽດເຂົ້າຮ່ວມຂອງ ທ່ານ ນ. ຟອງຄຳ ກິ່ງວິຄຳ ຮອງຫົວໜ້າກົມຂະບວນການ, ສູນກາງສະຫະພັນກຳມະບານລາວ, ມີບັນດາ ຄະນະບໍລິຫານງານສະຫະພັນກຳມະບານ ທຫລ, ຄະນະກຳມະບານຮາກຖານອ້ອມຂ້າງ ແລະ ສະມາຊິກເຂົ້າຮ່ວມຢ່າງພ້ອມພຽງ.

ຈຸດປະສົງຂອງການຈັດຊຸດອົບຮົມ ໃນຄັ້ງນີ້ ແມ່ນເພື່ອແນໃສ່ເຮັດໃຫ້ຄະນະບໍລິຫານງານແຕ່ລະຂັ້ນພາຍໃນ ສກບ.ທຫລ ໃຫ້ມີຄວາມຮັບຮູ້-ເຂົ້າໃຈຢ່າງເລິກເຊິ່ງ ຕໍ່ກັບບັນດາເນື້ອໃນຈິດໃຈຕົ້ນຕໍຂອງວຽກງານດັ່ງກ່າວ ໂດຍສະເພາະກຳໄດ້ເນື້ອໃນ, ມາດຕະຖານ, ບາດກ້າວໃນການຈັດຕັ້ງປະຕິບັດການປະເມີນຜົນຂະບວນການແຂ່ງຂັນດັ່ງກ່າວ ເພື່ອແນໃສ່ສ້າງຄວາມເປັນເອກະພາບໃນການນຳພາ-ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ເພື່ອເຮັດໃຫ້ຂະບວນການແຂ່ງຂັນ 5 ເປັນເຈົ້າ ຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ, ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ການປະຕິບັດວຽກງານວິຊາສະເພາະ ເພື່ອຊອກໃຫ້ເຫັນພະນັກງານ-ສະມາຊິກກຳມະບານທີ່ດີເດັ່ນ, ສ້າງໃຫ້ເປັນຂະບວນການຟົດຟື້ນ, ເລິກເຊິ່ງ, ກວ້າງຂວາງ, ຕໍ່ເນື່ອງ ແລະ ມີປະສິດທິຜົນ.





ກອງປະຊຸມຝຶກອົບຮົມດັ່ງກ່າວ ແມ່ນໄດ້ດຳເນີນມາເປັນເວລາເຄິ່ງວັນ, ດ້ວຍຜົນສຳເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ຢ່າງຈົບງາມ.

ຂ່າວ-ພາບ: ຫ້ອງການ ທຫລ

ຢູ່ເມືອງລາວໃຊ້ເງິນກີບລາວ